ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ໄຂສົກຮຽນໃໝ່ຂອງໂຮງຮຽນອະນຸບານທະນາຄານແຫ່ງ ສປປ ລາວ



ໃນວັນທີ 01 ກັນຍາ 2023 ທີ່ໂຮງຮຽນອະນຸບານທະນາຄານ ໄດ້ມີພິທີໄຂສົກຮຽນໃໝ່ 2023-2024 ໂດຍມີຄະນະອຳນວຍການໂຮງຮຽນ ແລະ ຄູອາຈານ ພ້ອມດ້ວຍນ້ອງໆນັກຮຽນເຂົ້າຮ່ວມຢ່າງພ້ອມພຽງ. ໃນພິທີ ທ່ານ ນາງ ນິງຄານ ສໍຍະວົງ ຄະນະອຳນວຍການໂຮງຮຽນອະນຸບານໄດ້ຂຶ້ນກ່າວໄຂສົກຮຽນໃໝ່ຢ່າງເປັນທາງການ. ຈຸດປະສົງກໍ່ເພື່ອຕ້ອນ ຮັບນ້ອງໆນັກຮຽນເຂົ້າຮຽນແຕ່ລະຊັ້ນຮຽນໃໝ່ ແລະ ລາຍງານການເຄື່ອນໄຫວຂອງໂຮງຮຽນອະນຸບານທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຫ້ອງການ ທະນາຄານແຫ່ງ ສປປ ລາວ ເຊິ່ງຮັບຝາກລູກ-ຫຼານຂອງພະນັກງານທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດລັດ ຕາມເງື່ອນໄຂຕົວຈິງຂອງໂຮງຮຽນ ແລະ ຫ້ອງຮຽນທີ່ສາມາດຮັບໄດ້.

ພະນັກງານທັງໝົດຢູ່ໂຮງຮຽນອະນຸບານທະນາຄານ ມີຈຳນວນ 34 ທ່ານ, ຍິງ 32 ທ່ານ; ໃນນັ້ນມີຄະນະອຳນວຍການ 4 ທ່ານ, ພະນັກງານຄູສອນ 20 ທ່ານ ແລະ ພະນັກງານບໍລິຫານປົ່ນອ້ອມ 10 ທ່ານ; ສຳລັບສົກຮຽນ 2023-2024 ໄດ້ມີນັກຮຽນທັງໝົດ ຈຳນວນ 200 ຄົນ, ຍິງ 92 ຄົນ, ໃນນີ້ໄດ້ແບ່ງອອກເປັນ 5 ຊັ້ນຮຽນ ຕາມແຕ່ລະອາຍຸເດັກໃນແຕ່ລະຊັ້ນຮຽນ. ແຕ່ລະຊັ້ນຮຽນມີຄູປະຈຳຫ້ອງ 1-2 ຄົນ, ມີຫ້ອງຮຽນ 11 ຫ້ອງ, ນັບແຕ່ຊັ້ນລ້ຽງເດັກກາງ ຈົນເຖິງ ຊັ້ນອະນຸບານປີທີ 3. ວັນທີ 04 ກັນຍາ 2023 ແມ່ນຈະເລີ່ມຕົ້ນການຮຽນການສອນເປັນປົກກະຕິໃນແຕ່ລະຊັ້ນຮຽນ.



ຕອນທ້າຍທ່ານກໍ່ໄດ້ເນັ້ນໜັກໃຫ້ພະນັກງານຄູເພີ່ມຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ເອົາໃຈໃສ່ໃນການສິດສອນ ແລະ ເບິ່ງແຍງດູແລເດັກ ໃຫ້ມີພັດທະນາການທີ່ດີ-ຮອບດ້ານ, ເພາະເດັກນ້ອຍໃນວັນນີ້ຄືຜູ້ໃຫ່ຍໃນວັນໜ້າ ແລະ ຮຽກຮ້ອງໃຫ້ຜູ້ປົກຄອງເດັກ-ນັກຮຽນເອົາໃຈໃສ່ໃນການປະຕິບັດກົດລະບຽບຂອງໂຮງຮຽນຢ່າງເຂັ້ມງວດ ເຊັ່ນ: ມາໂຮງຮຽນໃຫ້ທັນເວລາ, ປະຕິບັດລະບຽບການນຸ່ງຖືໃຫ້ຖືກຕ້ອງ, ຕັ້ງໃຈຮໍ່າຮຽນ, ມີມາລະຍາດທາງສັງຄົມ, ຫ້າວຫັນໃນການເຄື່ອນໄຫວກິດຈະກໍາຕ່າງໆຢູ່ໃນຫ້ອງ-ໃນໂຮງຮຽນຢ່າງເປັນຂະບວນຟົດຟື້ນ.

#ຮຽບຮຽງຂ່າວ-ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ

*ເງິນກີບຄືກຽດສັກສີຂອງຊາດ*